# ສຳເລັດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ II ປະຈຳປີ 2021




ເພື່ອສະຫຼຸບທົບທວນຄືນການປະຕິບັດວຽກງານລວມ ໃນໄລຍະ 1 ປີຜ່ານມາ ພ້ອມທັງວາງທິດທາງແຜນການເຄື່ອນໄຫວວຽກງານຂອງ ທະນາຄານແຫ່ງ ສປປລາວ (ທຫລ) ໃນຕໍ່ໜ້າ ປີ 2022, ຕອນເຊົ້າຂອງ ວັນທີ 30 ທັນວາ 2021 ນີ້ ຢູ່ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ II ປະຈຳປີ 2021 ຂຶ້ນ ໂດຍພາຍໃຕ້ການເປັນປະທານຂອງ ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ, ປະທານສະພາບໍລິຫານ ທຫລ; ພ້ອມນີ້, ກໍມີຮອງປະທານ, ຄະນະກຳມະການ, ຫົວໜ້າກົມ, ຮອງກົມ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ທີ່ປະຊຸມໄດ້ຮັບຟັງການລາຍງານ ການຈັດຕັ້ງປະຕິບັດວຽກງານທີ່ສຳຄັນ ເປັນຕົ້ນ: ການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງ ທຫລ 6 ເດືອນທ້າຍ ປີ 2021 ແລະ ທິດທາງແຜນການ ປີ 2021; ການຈັດຕັ້ງປະຕິບັດແຜນເງິນຕາ ປີ 2021 ແລະ ທິດທາງແຜນການ ປີ 2022; ການປະຕິບັດແຜນງົບປະມານ ປີ 2021 ແລະ ທິດທາງແຜນການປີ 2022 ຂອງ ທຫລ. ພ້ອມນີ້, ກໍມີບາງບັນຫາວຽກງານທີ່ປິ່ນອ້ອມອື່ນໆຈຳນວນໜຶ່ງ ເພື່ອລາຍງານ ແລະ ສະເໜີໃຫ້ສະພາບໍລິຫານພິຈາລະນາຮັບຮອງ.

ທ່ານ ສອນໄຊ ສິດພະໄຊ ກ່າວວ່າ: ຜ່ານມາ ທຫລ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການຕ່າງໆ ເພື່ອຮັກສາສະເຖຍລະພາບເງິນຕາແຫ່ງຊາດ, ຮັກສາສະເຖຍລະພາບທາງດ້ານການເງິນ, ລະບົບຊໍາລະສະສາງ ພ້ອມທັງຈັດຕັ້ງປະຕິບັດແຜນງົບປະມານ ແລະ ວຽກງານປົ່ນອ້ອມອື່ນໆ ຕາມມະຕິຂອງສະພາບໍລິຫານ ດ້ວຍຄວາມເປັນເຈົ້າການ ແລະ ຮັບຜິດຊອບສູງ ເປັນຕົ້ນ: ສຸມໃສ່ການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ປັບປຸງກົນໄກການຄຸ້ມຄອງຮ້ານແລກປ່ຽນ, ປັບປຸງດໍາລັດການເຄື່ອນໄຫວວຽກງານຂອງທະນາຄານນະໂຍບາຍ ແລະ ອື່ນໆ. ເຖິງຢ່າງໃດກໍຕາມ, ການຈັດຕັ້ງປະຕິບັດຕົວຈິງ ແມ່ນມີສິ່ງທ້າທາຍຫຼາຍດ້ານທ່າມກາງທີ່ສະພາບການຂອງພາກພື້ນ ແລະ ສາກົນ ເປັນຕົ້ນການແຜ່ລະບາດຂອງພະຍາດ COVID-19 ໃນຮອບໃໝ່ ໄດ້ເຮັດໃຫ້ສະພາບການຂະຫຍາຍຕົວຂອງເສດຖະກິດໂດຍລວມຂອງໂລກສືບຕໍ່ຂະຫຍາຍຕົວຫຼຸດລົງ. ໃນສະພາບຄວາມບໍ່ແນ່ນອນດັ່ງກ່າວ ໄດ້ສົ່ງຜົນໃຫ້ລາຄານໍ້າມັນ, ລາຄາຄໍາ ແລະ ຄ່າເງິນຢູ່ຕະຫຼາດສາກົນມີຄວາມຜັນຜວນແຮງ ເຮັດໃຫ້ການຮັກສາສະເຖຍລະພາບເງິນຕາແຫ່ງຊາດປະສົບກັບຄວາມຫຍຸ້ງຍາກ. ເຖິງຢ່າງໃດກໍຕາມ, ຂະແໜງການທະນາຄານ ຍັງສືບຕໍ່ຮັກສາສະເຖຍລະພາບເງິນຕາແຫ່ງຊາດ ໄດ້ໂດຍລວມ, ລະບົບທະນາຄານ ແລະ ສະຖາບັນການເງິນຍັງສືບຕໍ່ເຄື່ອນໄຫວ ປົກກະຕິ ແລະ ມີສະພາບຄ່ອງດີ.



ໃນຕອນທ້າຍ ທ່ານໄດ້ມັ້ນຕື່ມວ່າ: ຂະແໜງການທະນາຄານຕ້ອງໄດ້ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນ ເພື່ອຮັກສາສະຖຽນລະພາບທາງການເງິນ-ເງິນຕາ ໃຫ້ມີຄວາມສະຫງົບ, ໝັ້ນທ່ຽງ. ພ້ອມນີ້, ຈະສຸມໃສ່ປັບປຸງບັນດາໜ້າວຽກທີ່ຕິດພັນກັບ ທຫລ ທີ່ໄດ້ຖືກກໍານົດໃນວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ເງິນຕາ ໂດຍສະເພາະການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ປັບປຸງກົນໄກການຄຸ້ມຄອງຮ້ານແລກປ່ຽນ ພ້ອມທັງປະຕິບັດບັນດາຄາດໝາຍມະຫາພາກດ້ານເງິນຕາໃຫ້ໄດ້ຕາມທີ່ສະພາແຫ່ງຊາດຮັບຮອງ. ພ້ອມດຽວກັນນີ້, ກໍ່ຈະສືບຕໍ່ເອົາໃຈໃສ່ປັບປຸງລະບົບທະນາຄານ ແລະ ສະຖາບັນການເງິນ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ປັບປຸງລະບົບການຊໍາລະໃຫ້ທັນສະໄໝ, ລວມສູນ ແລະ ປອດໄພ.







*# ພາບ-ຂ່າວ: ສົມອິກ ເຄນຄໍາແພງ*

*ໃຊ້ເງິນກີບ ທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ*